ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ຄະນະເລຂາທິການສູນກາງພັກ ເລກທີ 04/ຄລສພ

ນະຄອນຫຼວງວຽງຈັນ, ວັນທີ 07 / 05 / 2018

# ຄຳສັ່ງ

## ຂອງຄະນະເລຂາທິການສູນກາງພັກ
## ວ່າດ້ວຍການກະກຽມດຳເນີນກອງປະຊຸມໃຫຍ່ອົງຄະນະພັກກະຊວງ-ອົງການ, ແຂວງ-ນະຄອນຫຼວງ; ອົງຄະນະພັກເມືອງ-ນະຄອນ ແລະ ຮາກຖານພັກ ໃນຂອບເຂດທົ່ວປະເທດ

ເຖິງ: ຄະນະປະຈຳພັກ, ຄະນະພັກກະຊວງ-ອົງການ ແລະ ແຂວງ, ນະຄອນຫຼວງ

- ອີງຕາມ ກົດລະບຽບພັກປະຊາຊົນປະຕິວັດລາວ ສະໄໝທີ X, ໝວດທີ II, ມາດຕາ 11; ໝວດທີ IV ມາດຕາ 20; ໝວດທີ V ມາດຕາ 25 ແລະ ໝວດ VI ມາດຕາ 30.

- ອີງຕາມ ມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ແລະ ມະຕິກອງປະຊຸມວຽກງານຈັດຕັ້ງທົ່ວປະເທດ ຄັ້ງທີ X.

ເພື່ອເຮັດໃຫ້ການກະກຽມດຳເນີນກອງປະຊຸມໃຫຍ່ຂອງພັກແຕ່ລະຂັ້ນ ຖືກຕ້ອງຕາມກົດລະບຽບພັກ.

## ຄະນະເລຂາທິການສູນກາງພັກ ອອກຄຳສັ່ງ:

**I. ຈຸດປະສົງລະດັບຄາດໝາຍ**

**1.** ເພື່ອເຮັດໃຫ້ການກະກຽມດຳເນີນກອງປະຊຸມໃຫຍ່ຂອງພັກແຕ່ລະຂັ້ນ ດຳເນີນໄປຖືກຕ້ອງຕາມກົດລະບຽບພັກ, ຮັບປະກັນການຊີ້ນຳ-ນຳພາຂອງຄະນະພັກຂັ້ນເທິງ ແລະ ມີຄວາມເປັນເອກະພາບໃນທົ່ວພັກ.

**2.** ເພື່ອກວດກາ, ຕີລາຄາການຊີ້ນຳ-ນຳພາຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ, ກົດລະບຽບພັກ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ແຫ່ງລັດ ຄັ້ງທີ VIII ກໍຄືການປະຕິບັດມະຕິກອງປະຊຸມໃຫຍ່, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງທ້ອງຖິ່ນ ແລະ ຂະແໜງການ ຢ່າງຮອບດ້ານ, ຖືກຕ້ອງ ແລະ ພາວະວິໄສ. ພ້ອມກັນນັ້ນ ກໍກຳນົດທິດທາງ, ຄາດໝາຍສູ້ຊົນແຕ່ລະດ້ານຂອງອົງຄະນະພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີຕໍ່ໜ້າ ໃຫ້ຖືກຕ້ອງສອດຄ່ອງກັບຄວາມເປັນຈິງ ແລະ ສາມາດຈັດຕັ້ງປະຕິບັດໄດ້.

3.ເພື່ອຍູ້ແຮງຂະບວນການແຂ່ງຂັນວຽກງານຮອບດ້ານທົ່ວອົງຄະນະພັກ, ປຸກລະດົມພະນັກງານ, ສະມາຊິກພັກ, ປະຊາຊົນ ແລະ ຊັ້ນຄົນຕ່າງໆເຂົ້າຮ່ວມຂະບວນການແຂ່ງຂັນ " ຮັກຊາດ ແລະ ພັດທະນາ " ໃຫ້ກາຍເປັນຂະບວນຟົດຟື້ນ ແລະ ຕໍ່ເນື່ອງ. ຜ່ານຂະບວນການດັ່ງກ່າວ ສາມາດສ້າງໄດ້ກົມກອງ, ບຸກຄົນທີ່ດີເດັ່ນ ເພື່ອເລືອກເຟັ້ນບຸກຄະລາກອນເຂົ້າໃນການຈັດຕັ້ງໃນລະບົບການເມືອງຂັ້ນຕ່າງໆ.

4.ການດໍາເນີນກອງປະຊຸມໃຫຍ່ຂອງພັກແຕ່ລະຂັ້ນ ເປັນການປັບປຸງພາຍໃນພັກ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ ເພື່ອຍົກສູງຄວາມສາມາດນໍາພາຂອງຄະນະພັກ ໃຫ້ສົມຄູ່ກັບການເລັ່ງທວງຂອງໜ້າທີ່ການເມືອງໃນໄລຍະໃໝ່; ຮັບປະກັນການຄົ້ນຄວ້າເລືອກເຟັ້ນບຸກຄະລາກອນປະກອບເຂົ້າໃນຄະນະພັກແຕ່ລະຂັ້ນ ໃຫ້ຖືກຕ້ອງຕາມມາດຕະຖານ, ເງື່ອນໄຂ ທີ່ໄດ້ກໍານົດໄວ້.

## II. ເນື້ອໃນການກະກຽມໃຫ້ແກ່ການດໍາເນີນກອງປະຊຸມໃຫຍ່ຂອງພັກ ແຕ່ລະຂັ້ນ

### 1. ການສ້າງຂະບວນການ

ສືບຕໍ່ທັນເອົາກໍາມະການໃນຄະນະພັກ ແຕ່ລະຂັ້ນ, ສະມາຊິກພັກ, ພະນັກງານລົງກໍ່ສ້າງຮາກຖານການເມືອງ, ຍູ້ແຮງຂະບວນການວຽກງານຮອບດ້ານ ໂດຍຕິດພັນກັບວຽກງານ 3 ສ້າງ ແລະ ຂະບວນການແຂ່ງຂັນ " ຮັກຊາດ ແລະ ພັດທະນາ. " ຜ່ານຂະບວນການວຽກງານຕົວຈິງ ເພື່ອເລືອກເຟັ້ນເອົາບຸກຄະລາກອນທີ່ມີມາດຕະຖານ, ເງື່ອນໄຂຄົບຖ້ວນເຂົ້າໃນໂຄງປະກອບຂອງຄະນະພັກແຕ່ລະຂັ້ນ.

- **ຂັ້ນກະຊວງ-ອົງການ**: ເອົາໃຈໃສ່ຍູ້ຂະບວນການວຽກງານຮອບດ້ານທົ່ວອົງຄະນະພັກຕົນ ໃຫ້ເປັນຂະບວນການຟົດຟື້ນ ແລະ ຕໍ່ເນື່ອງ, ຍູ້ແຮງຂະບວນການແຂ່ງຂັນປະຕິບັດວຽກງານວິຊາສະເພາະ ກໍຄືບັນດາຄາດໝາຍທີ່ຂະແໜງການຕົນຮັບຜິດຊອບ, ການປະຕິບັດລະບຽບວິໄນຂອງສໍານັກງານ, ກົມກອງ, ການສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ, ການປະຢັດ ແລະ ການແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ. ພ້ອມນັ້ນໃຫ້ເລືອກເຟັ້ນເອົາພະນັກງານ, ສະມາຊິກພັກ ຜູ້ທີ່ມີຄວາມຮູ້, ຄວາມສາມາດ, ມີອະນາຄົດລົງຊ່ວຍທ້ອງຖິ່ນຕາມຂະແໜງການ.

- **ຂັ້ນທ້ອງຖິ່ນ**: ໃຫ້ເລືອກເຟັ້ນ ແລະ ທັນເອົາພະນັກງານລົງສົມທົບກັບຮາກຖານຊຸກຍູ້ຂະບວນການວຽກງານຮອບດ້ານ, ປຸກລະດົມຂົນຂວາຍ ແລະ ນໍາພາມະຫາຊົນສືບຕໍ່ປະຕິບັດບັນດາຄາດໝາຍທີ່ມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນວາງອອກໃຫ້ປະກົດຜົນເປັນຈິງ. ໃນນັ້ນ ສໍາລັບຢູ່ຮາກຖານແມ່ນໃຫ້ສຸມໃສ່ປັບປຸງການຈັດຕັ້ງລະບົບການເມືອງຢູ່ຮາກຖານໃຫ້ມີຄວາມເຂັ້ມແຂງ, ປະຕິບັດຕາມ 4 ເນື້ອໃນ ແລະ 4 ຄາດໝາຍ; ເອົາໃຈໃສ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຍູ້ແຮງຂະບວນການພັດທະນາເສດຖະກິດ-ສັງຄົມ ເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນ ໃຫ້ບັນລຸບັນດາຄາດໝາຍທີ່ວາງໄວ້.

2. ການກະກຽມດ້ານເນື້ອໃນ

ກ. ກະກຽມລາຍງານການເມືອງ

ໂຄງປະກອບຂອງລາຍງານການເມືອງ ໃຫ້ແບ່ງອອກເປັນ 2 ພາກຄື:

**ພາກທີ I** ຕີລາຄາຮອບດ້ານຕໍ່ຜົນສຳເລັດການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ແລະ ການປັບປຸງພາຍໃນພັກ ຢູ່ຂັ້ນຂອງຕົນໃນ 5 ປີຜ່ານມາ. ການຕີລາຄາຕ້ອງໃຫ້ເລິກເຊິ່ງ, ພາວະວິໄສ, ກົງໄປກົງມາ ແລະ ຖືກຕ້ອງກັບສະພາບຄວາມເປັນຈິງ ນັບທັງດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ, ສາເຫດ ແລະ ບົດຮຽນທີ່ຖອດຖອນໄດ້.

**ພາກທີ II** ກຳນົດທິດທາງ, ໜ້າທີ່ ແລະ ບັນດາຄາດໝາຍໃຫຍ່ ທີ່ຈະຕ້ອງສູ້ຊົນນຳພາຈັດຕັ້ງປະຕິບັດໃນຕໍ່ໜ້າໃຫ້ຖືກຕ້ອງ, ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ວິໄສທັດ ແລະ ຍຸດທະສາດການພັດທະນາເສດຖະກິດ-ສັງຄົມຂອງລັດ;

ລາຍງານການເມືອງຂອງອົງຄະນະພັກໃດ ຕ້ອງສ່ອງແສງໃຫ້ເຫັນສະພາບຕົວຈິງ, ເງື່ອນໄຂ, ຈຸດພິເສດ ແລະ ໜ້າທີ່ການເມືອງຂອງອົງຄະນະພັກນັ້ນ. ຕ້ານທັດສະນະລອກແບບ ຫຼື ຈົດກາຍຈາກພາກສ່ວນອື່ນ.

**ຂ. ແຜນພັດທະນາເສດຖະກິດ-ສັງຄົມ ປະກອບດ້ວຍ 2 ພາກ**

**ພາກທີ I** ຕີລາຄາຜົນສຳເລັດ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ ຫຼື ແຜນພັດທະນາຂະແໜງການຕົນ ໃນໄລຍະ 5 ປີ ຜ່ານມາ.

**ພາກທີ II** ກຳນົດທິດທາງໜ້າທີ່ຂອງແຜນພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ ຫຼື ແຜນພັດທະນາຂະແໜງການຕົນ 5 ປີຕໍ່ໜ້າ ໃຫ້ສອດຄ່ອງກັບວິໄສທັດຍຸດທະສາດການພັດທະນາເສດຖະກິດ-ສັງຄົມຂອງລັດ, ສອດຄ່ອງກັບທ່າແຮງ ແລະ ຄວາມສາມາດບົ່ມຊ້ອນຂອງທ້ອງຖິ່ນ ແລະ ຂະແໜງການ.

**ຄ. ບົດສັງລວມການນຳພາລວມຂອງຄະນະບໍລິຫານງານພັກ**

- ຕີລາຄາດ້ານດີ, ດ້ານອ່ອນ, ສາເຫດ, ບົດຮຽນທີ່ຖອດຖອນໄດ້ໃນການຊີ້ນຳ-ນຳພາຮອບດ້ານຂອງຄະນະພັກ ໃນການປະຕິບັດແນວທາງນະໂຍບາຍ, ກົດລະບຽບພັກ, ມະຕິກອງປະຊຸມໃຫຍ່ຂັ້ນຕົນໃນໄລຍະ 5 ປີຜ່ານມາ, ຕີລາຄາຄວາມຮັບຜິດຊອບການເມືອງ, ແບບແຜນວິທີເຮັດວຽກ, ຄວາມສາມັກຄີພາຍໃນ, ຄວາມເປັນແບບຢ່າງຂອງຄະນະພັກ.
- ກຳນົດມາດຕະການ ແລະ ວິທີການແກ້ໄຂໃນຊຸມປີຕໍ່ໜ້າ.

3. ການກະກຽມດ້ານບຸກຄະລາກອນ

ກ. ການດຳເນີນຊີວິດການເມືອງ

**1. ການດຳເນີນຊີວິດການເມືອງຂອງຄະນະບໍລິຫານງານພັກແຕ່ລະຂັ້ນ**

ການດຳເນີນຊີວິດການເມືອງຂອງຄະນະບໍລິຫານງານພັກ ແມ່ນບັ້ນດຳເນີນຊີວິດການເມືອງທ້າຍສະໄໝຂອງຄະນະພັກແຕ່ລະຂັ້ນ, ມີໜ້າທີ່ສັງລວມການນຳພາລວມຂອງຄະນະພັກ ແລະ ບຸກຄົນໃນຄະນະພັກ. ກ່ອນການດຳເນີນຊີວິດການເມືອງຂອງຄະນະພັກ ບັນດາ

ສະຫາຍກຳມະການຄະນະພັກ ຕ້ອງໄດ້ດຳເນີນຊີວິດການເມືອງສຳຫຼວດກວດກາຢູ່ໜ່ວຍພັກບ່ອນຕົນຮ່ວມຊີວິດພັກ.

ການດຳເນີນຊີວິດການເມືອງ ຂອງຄະນະບໍລິຫານງານພັກແຕ່ລະຂັ້ນຕ້ອງເຮັດໃຫ້ເລິກເຊິ່ງເຖິງຖອງ ເພື່ອພັນລະຫາຍພົນຂອງການດຳເນີນຊີວິດການເມືອງປັບປຸງປົວແປງພັກ ປີ 2017; ມີການສະຫຼຸບ, ກວດກາຕີລາຄາຜົນຂອງການແກ້ໄຂຈຸດອ່ອນ, ຂໍ້ຄົງຄ້າງ ແລະ ຄຳຕຳໜິສິ່ງຂາວຂອງການຈັດຕັ້ງພັກ, ສະມາຊິກພັກ ຕໍ່ການນຳພາລວມຂອງຄະນະພັກ, ບຸກຄົນໃນຄະນະພັກ ໃນບັ້ນດຳເນີນຊີວິດການເມືອງປັບປຸງປົວແປງພັກ ຄັ້ງຜ່ານມາ.

2.ເນື້ອໃນການດຳເນີນຊີວິດການເມືອງ

- ສຳຫຼວດການນຳພາລວມຂອງຄະນະບໍລິຫານງານພັກ:

+ ເນື້ອໃນສຳຫຼວດການນຳພາລວມໃຫ້ປະຕິບັດຕາມໂລແມງ II ຂໍ້ 2.ຄ ຂອງຄຳສັ່ງສະບັບນີ້.

- ການສຳຫຼວດບຸກຄົນໃນຄະນະພັກ ແລະ ສະມາຊິກພັກ:

+ ເນື້ອໃນການສຳຫຼວດບຸກຄົນໃນຄະນະບໍລິຫານງານພັກ ແລະ ສະມາຊິກພັກ ໃຫ້ປະຕິບັດຕາມບົດແນະນຳຂອງຄະນະກວດກາສູນກາງພັກ.

3.ການດຳເນີນກອງປະຊຸມທາບທາມບຸກຄະລາກອນຮອບສຸດທ້າຍ, ກ່ອນຈະດຳເນີນການທາບທາມ ຄະນະຮັບຜິດຊອບບຸກຄະລາກອນ ຕ້ອງແຈ້ງຜົນສຳຫຼວດການນຳພາລວມຂອງຄະນະພັກ ແລະ ບຸກຄົນໃນຄະນະພັກຕໍ່ກອງປະຊຸມຊາບ ແລ້ວຈຶ່ງດຳເນີນການທາບທາມ.

4.ຄະນະພັກແຕ່ລະຂັ້ນ ໃຫ້ດຳເນີນກອງປະຊຸມຄົບຄະນະບໍລິຫານງານພັກ ທ້າຍສະໄໝເພື່ອພິຈາລະນາຮັບຮອງເອົາຮ່າງລາຍງານການເມືອງ, ບົດສຳຫຼວດການນຳພາລວມ, ແຜນພັດທະນາເສດຖະກິດ-ສັງຄົມ, ບຸກຄະລາກອນທີ່ຈະສະໝັກຮັບເລືອກຕັ້ງເຂົ້າໃນຄະນະພັກຊຸດໃໝ່ ແລະ ຄວາມພ້ອມດ້ານຕ່າງໆ ໃນການດຳເນີນກອງປະຊຸມໃຫຍ່ຂັ້ນຕົນ ເພື່ອລາຍງານ ແລະ ຂໍອະນຸມັດຈາກຄະນະພັກຂັ້ນເທິງ. ໄລຍະເວລາດຳເນີນກອງປະຊຸມຄົບຄະນະບໍລິຫານງານພັກທ້າຍສະໄໝ ໃຫ້ຈັດຂຶ້ນຫຍັບມໍ່ກັບໄລຍະເວລາເປີດກອງປະຊຸມໃຫຍ່ຂອງອົງຄະນະພັກຂັ້ນຕົນ.

ຂ. ການກະກຽມບຸກຄະລາກອນ ທີ່ຈະປະກອບເຂົ້າໃນຄະນະບໍລິຫານງານພັກ; ຄະນະປະຈຳພັກ; ເລຂາ, ຮອງເລຂາ ແລະ ຄະນະກວດກາພັກ

1. ທັດສະນະ ແລະ ບັນຫາທີ່ຕ້ອງເອົາໃຈໃສ່ໃນການເລືອກເຟັ້ນບຸກຄະລາກອນ

ການເລືອກເຟັ້ນບຸກຄະລາກອນເຂົ້າໃນຄະນະບໍລິຫານງານພັກແຕ່ລະຂັ້ນ ຕ້ອງຮັບປະກັນໃຫ້ຖືກຕ້ອງຕາມມາດຕະຖານ, ເງື່ອນໄຂ ທີ່ໄດ້ກຳນົດໄວ້.

ການເລືອກເຟັ້ນບຸກຄະລາກອນເຂົ້າໃນຄະນະພັກແຕ່ລະຂັ້ນ ຕ້ອງປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ສຽງສ່ວນໜ້ອຍປະຕິບັດຕາມສຽງສ່ວນຫຼາຍ.

ຜູ້ຈະສະໝັກຮັບເລືອກຕັ້ງເຂົ້າໃນຄະນະພັກແຕ່ລະຂັ້ນ ຕ້ອງໄດ້ຜ່ານການທາບທາມຄຳເຫັນຂອງສະມາຊິກພັກ, ພະນັກງານຫຼັກແຫຼ່ງ, ບ່ອນທີ່ດຳເນີນກອງປະຊຸມໃຫຍ່ສະມາຊິກພັກໃຫ້ດຳເນີນການທາບທາມ 2 ຮອບ, ບ່ອນທີ່ດຳເນີນກອງປະຊຸມໃຫຍ່ຜູ້ແທນ ໃຫ້ດຳເນີນການທາບທາມ 3 ຮອບ.

**2. ມາດຕະຖານຂອງຜູ້ຈະສະໝັກເຂົ້າໃນອົງການນຳຂອງພັກແຕ່ລະຂັ້ນ**

ມາດຕະຖານຄະນະບໍລິຫານງານພັກ; ຄະນະປະຈຳພັກ; ເລຂາ, ຮອງເລຂາ; ປະທານ, ຮອງປະທານຄະນະກວດກາພັກແຕ່ລະຂັ້ນ ແມ່ນໃຫ້ປະຕິບັດຕາມມາດຕະຖານລວມ ແລະ ມາດຕະຖານສະເພາະຂອງຄະນະບໍລິຫານງານພັກ ທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂໍ້ 2 ກົດລະບຽບພັກ ສະໄໝທີ X ແລະ ມາດຕາ 3, 5, 7, 10 ແລະ ມາດຕາ 12 ຂອງມະຕິກົມການເມືອງສູນກາງພັກ ສະບັບເລກທີ 030, ລົງວັນທີ 03 ມັງກອນ 2018 ວ່າດ້ວຍມາດຕະຖານຂອງພະນັກງານນຳພາ-ຄຸ້ມຄອງ.

**3. ເງື່ອນໄຂຜູ້ຈະສະໝັກຮັບເລືອກຕັ້ງເຂົ້າໃນຄະນະບໍລິຫານງານພັກແຕ່ລະຂັ້ນ**

ຜູ້ເກົ່າຈະສືບຕໍ່ສະໝັກຮັບເລືອກຕັ້ງເຂົ້າໃນຄະນະພັກແຕ່ລະຂັ້ນ ຕ້ອງມີອາຍຸກະສຽນບໍ່ເກີນ 60 ປີ. ສຳລັບບັນດາສະຫາຍກຳມະການສົມບູນ, ສຳຮອງສູນກາງພັກ ແມ່ນໃຫ້ປະຕິບັດຕາມມາດຕາ 5 ຂອງມະຕິກົມການເມືອງສູນກາງພັກ ສະບັບເລກທີ 030, ລົງວັນທີ 03 ມັງກອນ 2018 ວ່າດ້ວຍມາດຕະຖານຂອງພະນັກງານນຳພາ-ຄຸ້ມຄອງ.

ຜູ້ໃໝ່ຈະສະໝັກຮັບເລືອກຕັ້ງເຂົ້າໃນຄະນະພັກແຕ່ລະຂັ້ນ ຕ້ອງມີອາຍຸກະສຽນບໍ່ເກີນ 55 ປີ.

**ຄ. ໂຄງປະກອບ ແລະ ຈຳນວນຄະນະບໍລິຫານງານພັກແຕ່ລະຂັ້ນ**

**1. ໂຄງປະກອບຄະນະບໍລິຫານງານພັກຊຸດໃໝ່**

ຕ້ອງຮັບປະກັນ 3 ຣຸ່ນ ( ອາວຸໂສ, ກາງ, ໜຸ່ມ ) ປະກອບມີທັງຜູ້ເກົ່າ, ຜູ້ໃໝ່; ໃນນັ້ນຣຸ່ນໜຸ່ມ ແລະ ຣຸ່ນກາງ ໃຫ້ກວມອັດຕາສ່ວນຫຼາຍ, ແນໃສ່ຮັບປະກັນລັກສະນະສືບທອດຕໍ່ເນື່ອງ ແລະ ຫັນເປັນໜຸ່ມ. ສູ້ຊົນໃຫ້ໂຄງປະກອບເພດຍິງ, ຊົນເຜົ່າ ມີຈຳນວນເພີ່ມຂຶ້ນ;

ໂຄງປະກອບຂອງຄະນະບໍລິຫານງານພັກເມືອງ ໃຫ້ເອົາໃຈໃສ່ເລືອກເຟັ້ນເອົາເລຂາຄະນະພັກຮາກຖານ ແລະ ເລຂາໜ່ວຍພັກບ້ານ ທີ່ມີມາດຕະຖານ, ເງື່ອນໄຂຄົບຖ້ວນສະໝັກເຂົ້າໃນໂຄງປະກອບຂອງຄະນະພັກຊຸດໃໝ່ ໃຫ້ມີຈຳນວນເພີ່ມຂຶ້ນ.

**2. ຈຳນວນກຳມະການຄະນະບໍລິຫານງານພັກແຕ່ລະຂັ້ນ**

ການກຳນົດຈຳນວນກຳມະການຄະນະບໍລິຫານງານພັກຂັ້ນໃດ ແມ່ນກອງປະຊຸມຄົບຄະນະບໍລິຫານງານພັກຂັ້ນນັ້ນເປັນຜູ້ຄົ້ນຄວ້າ ນຳສະເໜີຄະນະພັກຂັ້ນເທິງກຸ່ມຕົກລົງ.

ເພື່ອເປັນບ່ອນອີງໃຫ້ຄະນະບໍລິຫານງານພັກແຕ່ລະຂັ້ນ ຈຶ່ງໄດ້ກໍານົດຂອບເຂດດ້ານຈໍານວນດັ່ງນີ້:

ຄະນະບໍລິຫານງານພັກແຂວງ, ນະຄອນຫຼວງວຽງຈັນ ປະກອບແຕ່ 27-41ສະຫາຍ;

ຄະນະບໍລິຫານງານພັກກະຊວງ-ອົງການ ປະກອບແຕ່ 7-27 ສະຫາຍ. ສໍາລັບກະຊວງປ້ອງກັນປະເທດ ປະກອບແຕ່ 27–33 ສະຫາຍ;

ຄະນະບໍລິຫານງານພັກເມືອງ, ນະຄອນ, ເທດສະບານ ປະກອບແຕ່ 19-27 ສະຫາຍ;

ຄະນະພັກຮາກຖານ ປະກອບແຕ່ 5-9 ສະຫາຍ; ຄະນະໜ່ວຍພັກປະກອບແຕ່ 3-5 ສະຫາຍ.

**3. ຈໍານວນຄະນະປະຈໍາພັກແຕ່ລະຂັ້ນ**

ຄະນະບໍລິຫານງານພັກໃດ ທີ່ມີຈໍານວນກໍາມະການຄະນະພັກ ແຕ່ 09 ສະຫາຍ ຂຶ້ນໄປຈຶ່ງໃຫ້ມີຄະນະປະຈໍາພັກ. ແຕ່ຈໍານວນຄະນະປະຈໍາພັກ ຫຼາຍສຸດບໍ່ໃຫ້ເກີນ 1/3 ຂອງຈໍານວນຄະນະບໍລິຫານງານພັກຂັ້ນນັ້ນ.

**4. ການກໍານົດຈໍານວນຜູ້ອອກສະໝັກຮັບເລືອກຕັ້ງຄະນະພັກແຕ່ລະຂັ້ນ**

ອົງຄະນະພັກແຂວງ, ນະຄອນຫຼວງ ຈໍານວນຜູ້ອອກສະໝັກຮັບເລືອກຕັ້ງ ຕ້ອງເກີນຈໍານວນຄະນະບໍລິຫານງານພັກ ທີ່ຕ້ອງການຢ່າງໜ້ອຍ 5 ສະຫາຍ;

ອົງຄະນະພັກກະຊວງ-ອົງການ ທີ່ຕ້ອງການຈໍານວນຄະນະບໍລິຫານງານພັກ ແຕ່ 21-27 ສະຫາຍ ຜູ້ອອກສະໝັກຮັບເລືອກຕັ້ງຕ້ອງເກີນຈໍານວນຄະນະພັກທີ່ຕ້ອງການ ຢ່າງໜ້ອຍ 4 ສະຫາຍ;

ອົງຄະນະພັກກະຊວງ-ອົງການ ທີ່ຕ້ອງການຄະນະພັກ ຈໍານວນ 9-19 ສະຫາຍ ຜູ້ອອກສະໝັກຮັບເລືອກຕັ້ງຕ້ອງເກີນຈໍານວນຄະນະພັກ ທີ່ຕ້ອງການຢ່າງໜ້ອຍ 3 ສະຫາຍ;

ອົງຄະນະພັກກະຊວງ-ອົງການ ທີ່ຕ້ອງການຄະນະພັກຈໍານວນ 7 ສະຫາຍ ຜູ້ອອກສະໝັກຮັບເລືອກຕັ້ງ ຕ້ອງເກີນຈໍານວນຄະນະພັກ ທີ່ຕ້ອງການ ຢ່າງໜ້ອຍ 2 ສະຫາຍ;

ອົງຄະນະພັກກະຊວງປ້ອງກັນປະເທດ ຈໍານວນຜູ້ອອກສະໝັກຮັບເລືອກຕັ້ງ ຕ້ອງເກີນຈໍານວນຄະນະບໍລິຫານງານພັກ ທີ່ຕ້ອງການຢ່າງໜ້ອຍ 05 ສະຫາຍ;

ອົງຄະນະພັກເມືອງ, ນະຄອນ, ເທດສະບານ ຈໍານວນຜູ້ອອກສະໝັກຮັບເລືອກຕັ້ງຕ້ອງເກີນຈໍານວນຄະນະບໍລິຫານງານພັກ ທີ່ຕ້ອງການຢ່າງໜ້ອຍ 04 ສະຫາຍ;

ຮາກຖານພັກ ທີ່ຕ້ອງການຄະນະພັກ ຈໍານວນ 09 ສະຫາຍ ຜູ້ອອກສະໝັກຮັບເລືອກຕັ້ງຕ້ອງເກີນຈໍານວນຄະນະພັກ ທີ່ຕ້ອງການຢ່າງໜ້ອຍ 03 ສະຫາຍ;

ຮາກຖານພັກ ທີ່ຕ້ອງການຄະນະພັກ ຈໍານວນ 3-7 ສະຫາຍ ຜູ້ອອກສະໝັກຮັບເລືອກຕັ້ງຕ້ອງເກີນຈໍານວນຄະນະພັກ ທີ່ຕ້ອງການຢ່າງໜ້ອຍ 02 ສະຫາຍ.

**5. ການເລືອກຕັ້ງຄະນະບໍລິຫານງານພັກ, ຄະນະປະຈໍາພັກ, ເລຂາ, ຮອງເລຂາ; ປະທານ ແລະ ຮອງປະທານຄະນະກວດກາພັກ**

ຄະນະບໍລິຫານງານພັກແຕ່ລະຂັ້ນ ແມ່ນກອງປະຊຸມໃຫຍ່ຜູ້ແທນ ຫຼື ກອງປະຊຸມໃຫຍ່ສະມາຊິກພັກຂັ້ນນັ້ນເປັນຜູ້ເລືອກຕັ້ງດ້ວຍຮູບການປ່ອນບັດລົງຄະແນນສຽງປິດລັບໂດຍກົງ;

ຄະນະປະຈໍາພັກ, ປະທານ, ຮອງປະທານຄະນະກວດກາພັກ ແມ່ນກອງປະຊຸມຄັ້ງປະຖົມມະລຶກຂອງຄະນະບໍລິຫານງານພັກຂັ້ນນັ້ນເລືອກຕັ້ງດ້ວຍຮູບການປ່ອນບັດລົງຄະແນນສຽງປິດລັບໂດຍກົງ;

ເລຂາ ແລະ ຮອງເລຂາ ແມ່ນກອງປະຊຸມຄັ້ງປະຖົມມະລຶກຂອງຄະນະບໍລິຫານງານພັກຂັ້ນນັ້ນເລືອກຕັ້ງດ້ວຍຮູບການລົງປະຊາມະຕິຮັບຮອງເອົາ.

**6. ເງື່ອນໄຂຜູ້ທີ່ຈະໄດ້ຮັບການເລືອກຕັ້ງເປັນເລຂາຄະນະບໍລິຫານງານພັກ ແລະ ປະທານຄະນະກວດກາພັກແຕ່ລະຂັ້ນ**

ເປົ້າໝາຍທີ່ຈະເລືອກເປັນເລຂາຄະນະບໍລິຫານງານພັກ ແລະ ປະທານຄະນະກວດກາພັກແຕ່ລະຂັ້ນ ຕ້ອງແມ່ນຜູ້ໄດ້ຮັບຄະແນນໄວ້ວາງໃຈໃນການເລືອກຕັ້ງຄະນະບໍລິຫານງານພັກຊຸດໃໝ່ ມີລໍາດັບທີບໍ່ຫຼຸດເຄິ່ງໜຶ່ງຂອງຈໍານວນຄະນະບໍລິຫານງານພັກຊຸດໃໝ່.

**໑. ການກະກຽມຜູ້ແທນສົມບູນ ແລະ ສໍາຮອງເຂົ້າຮ່ວມກອງປະຊຸມໃຫຍ່ຂອງພັກແຕ່ລະຂັ້ນ**

1. ມາດຕະຖານຂອງຜູ້ແທນສົມບູນ ແລະ ສໍາຮອງ

**ດ້ານຄຸນທາດການເມືອງ:** ຕ້ອງແມ່ນຜູ້ທີ່ມີຄຸນທາດການເມືອງທີ່ໜັກແໜ້ນ, ມີຄວາມຮັບຜິດຊອບການເມືອງສູງ, ເປັນຜູ້ທີ່ດີເດັ່ນ, ເປັນແບບຢ່າງນໍາໜ້າ ໃນການປະຕິບັດໜ້າທີ່ການເມືອງທີ່ໄດ້ຮັບຜິດຊອບ; ເປັນຜູ້ທີ່ມີບົດບາດ, ໄດ້ຮັບຄວາມເຊື່ອຖືໄວ້ວາງໃຈຂອງກຸ່ມແກວສະມາຊິກພັກ-ພະນັກງານ, ມີສະຕິຕໍ່ການຈັດຕັ້ງ, ຕໍ່ລະບຽບວິໄນ ແລະ ເປັນເຈົ້າການໃນການຄົ້ນຄວ້າພິຈາລະນາບັນຫາຕ່າງໆຂອງກອງປະຊຸມ.

**ດ້ານຄວາມສາມາດ:** ຕ້ອງແມ່ນຜູ້ທີ່ມີຄວາມສາມາດໃນການຄົ້ນຄວ້າປະກອບຄໍາເຫັນ ແລະ ຕົກລົງຕໍ່ບັນຫາຕ່າງໆ ໃນກອງປະຊຸມໃຫຍ່, ສາມາດກໍາແໜ້ນມະຕິກອງປະຊຸມໃຫຍ່ທີ່ໄດ້ຮັບຮອງ ເພື່ອນໍາໄປເຜີຍແຜ່ ແລະ ຈັດຕັ້ງພັນຂະຫຍາຍໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

**ດ້ານສຸຂະພາບ:** ຕ້ອງມີສຸຂະພາບແຂງແຮງດີ, ສາມາດເຂົ້າຮ່ວມກອງປະຊຸມໃຫຍ່ຈົນສໍາເລັດ. ພ້ອມນັ້ນ ກໍຕ້ອງມີຄວາມສາມາດສືບຕໍ່ຕິດຕາມການເຄື່ອນໄຫວຂອງຄະນະພັກຕະຫຼອດສະໄໝກອງປະຊຸມໃຫຍ່.

2. ຜູ້ແທນສົມບູນ ແລະ ສໍາຮອງ

ຜູ້ແທນສົມບູນ ແລະ ສໍາຮອງ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ອົງຄະນະພັກຂັ້ນຂອງຕົນ ຕ້ອງໄດ້ຮັບການເລືອກຕັ້ງຈາກກອງປະຊຸມໃຫຍ່ຂອງພັກຂັ້ນລຸ່ມກົ່ດຕົນ;

ກໍລະນີຈຳເປັນ ຄະນະພັກຂັ້ນຮຽກໂຮມກອງປະຊຸມໃຫຍ່ ມີສິດບົ່ງຕົວແຕ່ງຕັ້ງເອົາຜູ້ແທນເຂົ້າຮ່ວມກອງປະຊຸມໃຫຍ່ຂັ້ນຕົນໄດ້.

**3. ຈຳນວນຜູ້ແທນ ແລະ ແຂກກິດເຊີນ ທີ່ຈະເຂົ້າຮ່ວມກອງປະຊຸມໃຫຍ່ຂອງພັກ ແຕ່ລະຂັ້ນ**

**- ຈຳນວນຜູ້ແທນ**

ຈຳນວນຜູ້ແທນສົມບູນ ເຂົ້າຮ່ວມກອງປະຊຸມໃຫຍ່ຂອງພັກຂັ້ນໃດ ແມ່ນສິດຂອງຄະນະພັກຂັ້ນນັ້ນ ເປັນຜູ້ກຳນົດ, ທຸກການຈັດຕັ້ງພັກທີ່ຂຶ້ນກັບອົງຄະນະພັກຂັ້ນຕົນ ຕ້ອງມີຕົວແທນຂອງຕົນ ເຂົ້າຮ່ວມກອງປະຊຸມໃຫຍ່ອົງຄະນະພັກ ຂັ້ນຮຽກໂຮມ;

ການເພີ່ມຂຶ້ນຂອງຈຳນວນຜູ້ແທນເຂົ້າຮ່ວມກອງປະຊຸມໃຫຍ່ ອົງຄະນະພັກແຕ່ລະຂັ້ນບໍ່ໃຫ້ເກີນ 20% ຂອງຈຳນວນຜູ້ແທນເຂົ້າຮ່ວມກອງປະຊຸມໃຫຍ່ ຄັ້ງຜ່ານມາ.

- ແຂກກິດເຊີນ

ຈຳນວນ ແລະ ເປົ້າໝາຍແຂກກິດເຊີນເຂົ້າຮ່ວມກອງປະຊຸມໃຫຍ່ຂັ້ນໃດ ແມ່ນໃຫ້ຄະນະພັກຂັ້ນນັ້ນ ເປັນຜູ້ກຳນົດຕາມຄວາມເໝາະສົມ.

4. ກອງປະຊຸມໃຫຍ່ຜູ້ແທນ ແລະ ກອງປະຊຸມໃຫຍ່ສະມາຊິກພັກ

ອົງຄະນະພັກ, ຮາກຖານພັກໃດ ທີ່ມີຈຳນວນສະມາຊິກພັກ ແຕ່ 200 ສະຫາຍ ຂຶ້ນໄປ ແມ່ນໃຫ້ດຳເນີນກອງປະຊຸມໃຫຍ່ຜູ້ແທນ; ອົງຄະນະພັກ, ຮາກຖານພັກໃດ ມີສະມາຊິກພັກບໍ່ເຖິງ 200 ສະຫາຍ ໃຫ້ດຳເນີນກອງປະຊຸມໃຫຍ່ສະມາຊິກພັກ.

## III. ກຳນົດໄລຍະເວລາດຳເນີນກອງປະຊຸມໃຫຍ່ຄະນະພັກແຕ່ລະຂັ້ນ

**1. ກຳນົດໄລຍະເວລາດຳເນີນກອງປະຊຸມໃຫຍ່**

ອົງຄະນະພັກກະຊວງ-ອົງການ, ແຂວງ, ນະຄອນຫຼວງ ໃຫ້ສຳເລັດກອງປະຊຸມໃຫຍ່ບໍ່ກາຍເດືອນ 9 ປີ 2020;

ອົງຄະນະພັກເມືອງ, ນະຄອນ, ເທດສະບານ ແລະ ຮາກຖານພັກຂະແໜງການອ້ອມຂ້າງແຂວງ ແລະ ຮາກຖານພັກກະຊວງ-ອົງການ ໃຫ້ສຳເລັດກອງປະຊຸມໃຫຍ່ບໍ່ກາຍເດືອນ 3 ປີ 2020;

ຮາກຖານພັກອ້ອມຂ້າງເມືອງ, ບ້ານ ໃຫ້ສຳເລັດກອງປະຊຸມໃຫຍ່ບໍ່ກາຍເດືອນ 9 ປີ 2019.

**2. ກຳນົດເວລາດຳເນີນກອງປະຊຸມໃຫຍ່ຂອງພັກ ແຕ່ລະຂັ້ນ**

ກອງປະຊຸມໃຫຍ່ອົງຄະນະພັກແຂວງ ແລະ ນະຄອນຫຼວງ ໃຊ້ເວລາ 2-3 ວັນ;

ກອງປະຊຸມໃຫຍ່ອົງຄະນະພັກກະຊວງ-ອົງການ ໃຊ້ເວລາ 1 ວັນເຄິ່ງ-2 ວັນ;

ກອງປະຊຸມໃຫຍ່ອົງຄະນະພັກເມືອງ, ນະຄອນ ແລະ ເທດສະບານ ໃຊ້ເວລາ1-2 ວັນ;

ກອງປະຊຸມໃຫຍ່ຮາກຖານພັກ ໃຊ້ເວລາ 1 ວັນ.

## IV. ວິທີການຈັດຕັ້ງປະຕິບັດ

**1.** ຄະນະເລຂາທິການສູນກາງພັກ ເປັນຜູ້ຊີ້ນຳໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້.

**2.** ມອບໃຫ້ບັນດາອົງການ, ຂະແໜງການເສນາທິການຂັ້ນສູນກາງ ທີ່ກ່ຽວຂ້ອງອອກຄຳແນະນຳກ່ຽວກັບການປະຕິບັດຄຳສັ່ງສະບັບນີ້ ດັ່ງນີ້:

ມອບໃຫ້ຄະນະຈັດຕັ້ງສູນກາງພັກ ອອກຄຳແນະນຳກ່ຽວກັບວິທີການ, ບາດກ້າວ, ຂັ້ນຕອນໃນການກະກຽມຈັດຕັ້ງດຳເນີນກອງປະຊຸມໃຫຍ່ເປັນຕົ້ນ: ດ້ານບຸກຄະລາກອນ ແລະ ລົງຕິດຕາມ, ຊຸກຍູ້ການກະກຽມດຳເນີນກອງປະຊຸມໃຫຍ່ອົງຄະນະພັກແຕ່ລະຂັ້ນ;

ມອບໃຫ້ຄະນະກວດກາສູນກາງພັກ ອອກຄຳແນະນຳກ່ຽວກັບການດຳເນີນຊີວິດການເມືອງ, ໂຄງຮ່າງບົດສຳຫຼວດການນຳພາລວມຂອງຄະນະພັກແຕ່ລະຂັ້ນ, ໂຄງຮ່າງບົດສຳຫຼວດບຸກຄົນໃນຄະນະພັກ, ສະມາຊິກພັກ; ຄະນະກວດກາສູນກາງພັກ ສົມທົບກັບ ຄະນະຈັດຕັ້ງສູນກາງພັກ ຊີ້ນຳ, ລົງຊຸກຍູ້ ແລະ ຕິດຕາມບັ້ນດຳເນີນຊີວິດການເມືອງຂອງຄະນະພັກແຕ່ລະຂັ້ນ;

ມອບໃຫ້ຫ້ອງວ່າການສູນກາງພັກ ອອກຄຳແນະນຳ, ກຳນົດເນື້ອໃນ, ໂຄງຮ່າງ, ວິທີກະກຽມ ແລະ ຂຽນລາຍງານການເມືອງຂອງຄະນະພັກແຕ່ລະຂັ້ນ ພ້ອມທັງລົງຕິດຕາມ, ຊຸກຍູ້ການກະກຽມລາຍງານການເມືອງດັ່ງກ່າວ;

ມອບໃຫ້ຄະນະໂຄສະນາອົບຮົມສູນກາງພັກ ອອກຄຳແນະນຳ ກຳນົດເນື້ອໃນໂຄສະນາສຶກສາອົບຮົມການເມືອງ-ແນວຄິດ, ປຸກລະດົມຂະບວນການ ແລະ ອອກບົດແນະນຳ ໃນການຈັດຕັ້ງເຜີຍແຜ່ຮ່າງຮຽນເອກະສານສຳຄັນຕ່າງໆ;

ມອບໃຫ້ແນວລາວສ້າງຊາດ, ບັນດາອົງການຈັດຕັ້ງມະຫາຊົນ ເປັນເຈົ້າການໃນການປຸກລະດົມຂົນຂວາຍມະຫາຊົນ ແລະ ປະຊາຊົນບັນດາເຜົ່າ ເຂົ້າຮ່ວມຂະບວນການກະກຽມກອງປະຊຸມໃຫຍ່ຂັ້ນຂອງຕົນ ໃຫ້ເປັນຂະບວນການຟົດຟື້ນ.

**3.** ມອບໃຫ້ລັດຖະບານ ຊີ້ນຳບັນດາກະຊວງ-ອົງການທີ່ກ່ຽວຂ້ອງອອກຄຳແນະນຳ ແລະ ລົງຕິດຕາມ, ຊຸກຍູ້ກ່ຽວກັບການກະກຽມແຜນພັດທະນາເສດຖະກິດ-ສັງຄົມ, ແຜນພັດທະນາຂະແໜງການ; ບົດແນະນຳການຂຽນບົດສຳຫຼວດຕີລາຄາປະເມີນຜົນການປະຕິບັດໜ້າທີ່ວຽກງານຂອງພະນັກງານ, ລັດຖະກອນທົ່ວໄປ.

**4.** ມອບໃຫ້ລັດຖະບານ ຊີ້ນຳກະຊວງການເງິນ ຄົ້ນຄວ້າຈັດສັນງົບປະມານຮັບໃຊ້ກອງປະຊຸມໃຫຍ່ຂອງພັກ ແຕ່ລະຂັ້ນ.

**5.** ຄະນະພັກແຕ່ລະຂັ້ນເມື່ອໄດ້ຮັບຄຳສັ່ງສະບັບນີ້ ໃຫ້ຮີບຮ້ອນຈັດຕັ້ງເຊື່ອມຊຶມ ແລະ ອອກມະຕິຕົກລົງແຕ່ງຕັ້ງຄະນະຮັບຜິດຊອບລວມ, ອະນຸກຳມະການຊ່ວຍວຽກກະກຽມດຳເນີນກອງປະຊຸມໃຫຍ່ຂັ້ນຂອງຕົນ; ຄົ້ນຄວ້າ ຂື້ນແຜນງົບປະມານ ແລະ ສ້າງແຜນການລະອຽດໃນການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ ໃຫ້ທັນຕາມເວລາທີ່ກຳນົດໄວ້.

**6.** ພາຍຫຼັງກອງປະຊຸມໃຫຍ່ອົງຄະນະພັກໃດສຳເລັດແລ້ວ ຕ້ອງສະຫຼຸບຖອດຖອນບົດຮຽນ ແລະ ຮີບຮ້ອນຈັດຕັ້ງຜັນຂະຫຍາຍຜົນສຳເລັດຂອງກອງປະຊຸມໃຫຍ່ ໃຫ້ເປັນຂະບວນຢ່າງກວ້າງຂວາງ, ເລິກເຊິ່ງໃນໝູ່ມະຫາຊົນ ແນໃສ່ເຮັດໃຫ້ມະຕິກອງປະຊຸມໃຫຍ່ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ເກີດຜົນຕົວຈິງ.

**7.** ຄຳສັ່ງສະບັບນີ້ປ່ຽນແທນຄຳສັ່ງ ເລກທີ 07 ຂອງຄະນະເລຂາທິການສູນກາງພັກ, ລົງວັນທີ 15/2/2013, ຄຳສັ່ງເພີ່ມເຕີມເລກທີ 06 ຂອງຄະນະເລຂາທິການສູນກາງພັກ ລົງວັນທີ 24/2/2014 ແລະ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ; ຜ່ານການຈັດຕັ້ງປະຕິບັດຕົວຈິງ, ຖ້າມີບັນຫາໃດບໍ່ຈະແຈ້ງ ຫຼື ພົບຄວາມຫຍຸ້ງຍາກໃຫ້ລາຍງານຕໍ່ຄະນະເລຂາທິການສູນກາງພັກ ໂດຍຜ່ານຄະນະຈັດຕັ້ງສູນກາງພັກ ແລະ ອົງການທີ່ກ່ຽວຂ້ອງເພື່ອໃຫ້ການຊີ້ນຳທັນເວລາ.

ຄະນະເລຂາທິການສູນກາງພັກ
ຜູ້ປະຈຳການ

ພັນຄຳ ວິພາວັນ